( ແປບໍ່ເປັນທາງການ )

# ບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືຕ້ານການຄ້າມະນຸດ ຂອງປະເທດສະມາຊິກອານຸພາກພື້ນແມ່ນ້ຳຂອງ

ໃນນາມຜູ້ຕາງໜ້າຂອງລັດຖະບານແຫ່ງຣາຊະອານາຈັກ ກຳປູເຈຍ, ສາທາລະນະລັດປະຊາຊົນຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບມຽນມາ, ຣາຊະອານາຈັດໄທ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ:

ດ້ວຍຄວາມເປັນຫ່ວງເປັນໄຍຢ່າງເລິກເຊິ່ງ ຕໍ່ຜູ້ເຄາະຮ້າຍຈາກການຄ້າມະນຸດໃນບັນດາປະເທດສະມາຊິກອານຸພາກພື້ນແມ່ນ້ຳຂອງ ແລະ ຜູ້ເຄາະຮ້າຍທີ່ຖືກສົ່ງມາຈາກປະເທດສະມາຊິກອານຸພາກພື້ນດັ່ງກ່າວໄປຍັງພາກພື້ນ ອື່ນໆຂອງໂລກ.

ຢືນຢັນຢ່າງເດັດຂາດ ເຖິງການບໍ່ຍອມຮັບຢ່າງສິ້ນເຊີງຕໍ່ການຄ້າ, ການຊື້, ການຂາຍ, ການລັກພາໂຕ, ການກັກຂັງໜ່ວງໜ່ຽວຂອງມະນຸດ ແລະ ທຸກຮູບແບບຂອງການບັງຄັບຂູດຮີດ, ເຊິ່ງເປັນການຂັດ ກັບສິດທິພື້ນຖານ ແລະ ສິດອັນຊອບທຳຂອງມະນຸດ;

ຮັບຮູ້ວ່າ ຄວາມທຸກຍາກ, ຂາດການສຶກສາ, ຄວາມບໍ່ສະເໝີພາບ, ລວມເຖິງການດ້ອຍໂອກາດທາງສັງຄົມ, ເປັນເຫດໃຫ້ເກີດຄວາມສ່ຽງຕໍ່ການຖືກຄ້າມະນຸດ;

ໂດຍຮັບຮູ້ອີກວ່າ ມີການກ່ຽວຂ້ອງກັນລະຫວ່າງການຄ້າມະນຸດ ແລະ ຄວາມຕ້ອງການທີ່ເພີ່ມຂຶ້ນຂອງການຂູດຮີດແຮງງານ ແລະ ການຂູດຮີດດ້ານການບໍລິການທາງເພດ;

ຮັບຊາບວ່າ ການຄ້າມະນຸດໄດ້ມີທ່າອ່ຽງຂະຫຍາຍຕົວຂຶ້ນຈາກການຈຳແນກທາງດ້ານທັດສະນະ ຄະຕິ, ການປະພຶດ ແລະ ນະໂຍບາຍຕໍ່ບົດບາດ ຍິງ-ຊາຍ, ອາຍຸ, ເຊື້ອຊາດ, ຊົນຊາດ ຊົນເຜົ່າ ແລະ ກຸ່ມຄົນໃນສັງຄົມ;

ໂດຍເຂົ້າໃຈຢ່າງເລິກເຊິ່ງວ່າ ເດັກນ້ອຍ ແລະ ແມ່ຍິງ ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມສ່ຽງໂດຍສະເພາະ ແລະ ຮຽກຮ້ອງໃຫ້ມີມາດຕະການພິເສດ ເພື່ອຮັບປະກັນການຄຸ້ມຄອງ ແລະ ການເປັນ ຢູ່ທີ່ດີ ;

ດ້ວຍຄວາມເປັນຫ່ວງ ຕໍ່ການລົມຮູ້ຮ່ວມຄິດກັນລະຫວ່າງສະມາຊິກໃນຊຸມຊົນ ແລະກຸ່ມອາດຊະຍາກຳຄ້າມະນຸດ ທີ່ມີການຈັດຕັ້ງ ;

ເຫັນວ່າ ມີຄວາມຈຳເປັນສ້າງການຕອບໂຕ້ທີ່ເຂັ້ມແຂງ ທາງດ້ານຂະບວນການຍຸດຕິທຳ ຕໍ່ການຄ້າມະນຸດ, ເພື່ອຮັບປະກັນຄວາມເປັນທຳໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ກຳຈັດອະພິສິດຂອງຜູ້ຄ້າມະນຸດ ແລະ ພວກສະແຫວງກຳໄລທາງດ້ານການເງິນຈາກອາດຊະຍາກຳດັ່ງກ່າວ :

ຮັບຮູ້ຄວາມສຳຄັນໃນການລົງໂທດທີ່ມີປະສິດທິພາບ ແລະ ຖືກຕ້ອງເຫມາະສົມ ຕໍ່ພວກຄ້າມະນຸດ, ລວມທັງການອາຍັດ ແລະ ຍຶດຊັບ ເພື່ອນຳໃຊ້ເປັນຜົນປະໂຫຍດໃຫ້ແກ່ຜູ້ຖືກເຄາະຮ້າຍ ;

ຮັບຮູ້ການປະກອບສ່ວນອັນສຳຄັນ ບົນພື້ນຖານຄວາມສະຫມັກໃຈທີ່ຜູ້ຫລຸດພົ້ນຈາກການຄ້າມະນຸດສາມາດຂະຫຍາຍ, ດຳເນີນການ ແລະ ປະເມີນການແກ້ໄຂການຕ້ານການຄ້າມະນຸດ, ລວມທັງການຮັບປະກັນການດຳເນີນຄະດີຕໍ່ຜູ້ຄ້າມະນຸດ ;

ຮັບຮູ້ເຖິງບົດບາດທີ່ສຳຄັນຂອງບັນດາອົງກອນຕ່າງໆ ໃນຂົງເຂດວຽກງານການປົກປ້ອງ, ປ້ອງກັນ, ສືບສວນສອບສວນ, ຊ່ວຍເຫຼືອ, ສົ່ງກັບບ້ານ, ຟື້ນຟູ, ແລະ ການກັບຄືນສູ່ສັງຄົມ, ລວມທັງການສະຫນັບສະຫນູນສ້າງຄວາມເຂັ້ມແຂງໃຫ້ກັບຂະບວນການຍຸດຕິທຳ ;

ຮັບຮູ້ວ່າ ແຕ່ລະປະເທດພາຄີ ຈະໄດ້ເອົາໃຈໃສ່ຕາມຄວາມສາມາດສູງສຸດຂອງຕົນ ທີ່ເອື້ອອຳນວຍໃນການຜັນຂະຫຍາຍພັນທະຕໍ່ບັນທຶກຄວາມເຂົ້າໃຈສະບັບນີ້ໃນທຸກວິທີທາງໂດຍລຳພັງ ແລະ ຜ່ານການຊ່ວຍເຫລືອ ແລະ ການຮ່ວມມືຂອງສາກົນ ;

ທວນຄືນເຖິງຖະແຫຼງການສາກົນ ກ່ຽວກັບສິດທິມະນຸດ, ໂດຍສະເພາະໃນມາດຕາ 4, ທີ່ລະບຸວ່າ " ບໍ່ໃຫ້ຜູ້ໃດຖືກນຳມາຂາຍເປັນທາດ ຫລື ຖືກບັງຄັບເປັນທາດ; ຫ້າມມີການຂ້າທາດ ແລະ ການຄ້າທາດໃນທຸກຮູບແບບ " ;

ສະເໜີໃຫ້ ບັນດາປະເທດອະນຸພາກພື້ນລຸ່ມແມ່ນ້ຳຂອງ ທີ່ໃຫ້ສັດຕະຍາບັນ/ຫຼືໄດ້ໃຫ້ການຮັບຮອງຕໍ່ບັນດາເອກະສານກົດໝາຍສາກົນ ກ່ຽວກັບກັບການຄ້າມະນຸດ ແລະ ເອກະສານພົວພັນເຖິງການຂູດຮີດ ຊຶ່ງປະກອບມີ :

- ສົນທິສັນຍາສະຫະປະຊາຊາດກ່ຽວກັບການຕ້ານອາດຊະຍາກຳຂ້າມຊາດ ທີ່ມີການຈັດຕັ້ງ ແລະ ພາກເພີ່ມ ເຕີມກ່ຽວກັບການປ້ອງກັນ, ສະກັດກັ້ນ ແລະ ລົງໂທດຜູ້ຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ;
- ສົນທິສັນຍາສະຫະປະຊາຊາດກ່ຽວກັບການລົບລ້າງທຸກຮູບແບບຂອງການແບ່ງແຍກແມ່ຍິງ (CEDAW);
- ສົນທິສັນຍາສະຫະປະຊາຊາດ ກ່ຽວກັບສິດທິເດັກນ້ອຍ (CRC), ແລະ ພາກເພີ່ມເຕີມ ກ່ຽວກັບການຂາຍເດັກນ້ອຍ, ໂສເພນີເດັກນ້ອຍ ແລະ ການຖ່າຍຮູບໂປ້ເດັກນ້ອຍ, ແລະ ການນຳເອົາເດັກນ້ອຍເຂົ້າໄປກ່ຽວຂ້ອງກັບຄວາມຂັດແຍ່ງທາງດ້ານກຳລັງ;
- ສົນທິສັນຍາການບັງຄັບໃຊ້ແຮງງານຂອງອົງການແຮງງານສາກົນມາດຕາ (29 ແລະ 105);
- ສົນທິສັນຍາຂອງອົງການແຮງງານສາກົນ ມາດຕາ (182) ວ່າດ້ວຍການຫ້າມໃຊ້, ແລະ ການປະຕິບັດການຮີບດ່ວນ ກ່ຽວກັບການກຳຈັດຮູບແບບທີ່ຮຸນແຮງໃນການໃຊ້ແຮງງານເດັກນ້ອຍ;

ແລະ ສົ່ງເສີມໃຫ້ລັດຖະບານຂອງບັນດາປະເທດ ທີ່ຍັງບໍ່ທັນໃຫ້ສັດຕະຍາບັນ ຫລື ຮັບຮອງເອົາເອກະສານດັ່ງກ່າວ, ຮີບຮ້ອນຮັບຮອງເອົາໂດຍໄວ ;
ຢືນຢັນອີກເຖິງຄວາມສຳຄັນຂອງຂໍ້ແນະນຳພື້ນຖານ ແລະ ຄູ່ມືກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດຂອງອົງການສະຫະປະຊາຊາດຕາມບົດລາຍງານຂອງ UNHCR (2002) ຕໍ່ UNECOSOC ;

ຢືນຢັນຄືນຂໍ້ລິເລີ່ມ ແລະ ພັນທະຕ່າງໆຂອງອະນຸພາກພື້ນ ກ່ຽວກັບການຕ້ານການຄ້າມະນຸດ ;

ສະແດງຄວາມຍິນດີ ຕໍ່ບົດບັນທຶກຄວາມເຂົ້າໃຈສະບັບເລີ່ມຕົ້ນ ລະຫວ່າງໄທ ແລະ ກໍາປູເຈຍ ກ່ຽວກັບການຮ່ວມມືສອງຝ່າຍ ໃນການກໍາຈັດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ແລະ ການຊ່ວຍເຫລືອຜູ້ຖືກເຄາະຮ້າຍ (2003) ແລະ ຄວາມພະຍາຍາມໃນການຂະຫຍາຍການຮ່ວມມືສອງຝ່າຍທີ່ມີລັກສະນະຄ້າຍຄືກັນນີ້ ໃນບັນດາປະເທດອະນຸພາກພື້ນແມ່ນໍ້າຂອງ;

ສະແດງຄວາມຍິນດີ ຕໍ່ຄວາມສໍາຄັນຂອງຂໍ້ຕົກລົງສອງຝ່າຍ ກ່ຽວກັບການຍ້າຍຖິ່ນຖານ, ເຊັ່ນ: ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການຮ່ວມມືໃນການຈ້າງງານລະຫວ່າງໄທ ແລະ ກໍາປູເຈຍ, ໄທ ແລະ ລາວ, ໄທ ແລະ ມຽນມາ, ໃນການສົ່ງເສີມຄວາມປອດໄພ ໃນການຍ້າຍຖິ່ນຖານ ການມີລະບຽບຫລັກການຖືກຕ້ອງ ເພື່ອແນໃສ່ຫລຸດຜ່ອນຄວາມຕ້ອງການຂອງແຮງງານຜິດກົດໝາຍທີ່ນໍາໄປ ສູ່ການຄ້າມະນຸດ ; ແລະ

ຮຽກຮ້ອງໃຫ້ບັນດາປະເທດ ນອກປະເທດອະນຸພາກພື້ນແມ່ນໍ້າຂອງໃຫ້ການຮ່ວມມືກັບປະເທດພວກເຮົາໃນການຕໍ່ສູ້ຕ້ານການຄ້າມະນຸດ ;

ດັ່ງນັ້ນ, ຈຶ່ງຕົກລົງປະຕິບັດ ດັ່ງນີ້ :

**I. ໃນຂອບເຂດຂອງນະໂຍບາຍ ແລະ ການຮ່ວມມື (ພາຍໃນ ແລະຕ່າງປະເທດ) ;**

1. ຊຸກຍູ້ການນໍາໃຊ້ຄໍານິຍາມຂອງການຄ້າມະນຸດ ທີ່ບັນຈຸໃນພາກເພີ່ມເຕີມຂອງການປົກປ້ອງ, ສະກັດກັ້ນ ແລະ ລົງໂທດຜູ້ທີ່ພົວພັນກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍເຊິ່ງເປັນຂໍ້ເພີ່ມເຕີມຂອງສົນທິສັນຍາ ສະຫະປະຊາຊາດ ກ່ຽວກັບການຕ້ານອາດຊະຍາກໍາຂ້າມຊາດ ທີ່ມີການຈັດຕັ້ງ ;
2. ພັດທະນາແຜນແມ່ບົດລະດັບຊາດ ກ່ຽວກັບການຕ້ານການຄ້າມະນຸດໃນທຸກຮູບແບບ;

3. ດຳເນີນການສ້າງຕັ້ງ ແລະ ສ້າງຄວາມເຂັ້ມແຂງລະດັບຊາດ, ຄະນະກຳມະການຈາກຫລາຍຝ່າຍ ກ່ຽວກັບການຄ້າມະນຸດ ທີ່ມີພາລະບົດບາດ ແລະ ຫນ້າທີ່ປະສານງານໃນການດຳເນີນປະຕິບັດແຜນແມ່ບົດແຫ່ງຊາດ ແລະ ກິດຈະກຳຕ່າງໆ ເພື່ອຕ້ານການຄ້າມະນຸດ ;
4. ສ້າງຕັ້ງກົນໄກ ເພື່ອເສີມຂະຫຍາຍໃຫ້ເຂັ້ມແຂງໃນການຮ່ວມມືໃນຂົງເຂດ ແລະການແລກປ່ຽນຂໍ້ມູນ ຂ່າວສານ, ແລະ ແຕ່ງຕັ້ງຈຸດປະສານງານຂອງການຕ້ານການຄ້າມະນຸດ ;
5. ສົ່ງເສີມການຮ່ວມມືໃນຂົງເຂດ ກ່ຽວກັບການຕ້ານການຄ້າມະນຸດ, ໂດຍສະເພາະຜ່ານຂໍ້ຕົກລົງສອງຝ່າຍ ແລະ ຫລາຍຝ່າຍ, ແລະ
6. ຮັດແຫນ້ນການຮ່ວມມືລະຫວ່າງລັດຖະບານ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດ ເພື່ອຕ້ານການຄ້າມະນຸດ ;

I. ໃນຂອບເຂດຂອງກົດໝາຍ, ການບັງຄັບໃຊ້ກົດໝາຍ ແລະ ຄວາມຍຸຕິທຳ:

7. ຮັບຮອງ ແລະ ບັງຄັບໃຊ້, ກົດໝາຍທີ່ກ່ຽວຂ້ອງເຫມາະສົມໄວເທົ່າທີ່ຈະໄວໄດ້ ໃນການຕ້ານການຄ້າມະນຸດ ;
8. ຮັບຮອງເອົາແນວທາງທີ່ເຫມາະສົມ ແລະ ຈັດການຝຶກອົບຮົມໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ເພື່ອພິສູດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຢ່າງວ່ອງໄວ ແລະ ຖືກຕ້ອງ ແລະ ປັບປຸງຂະບວນການສືບສວນ ແລະ ຂະບວນການຍຸຕິທຳ ;
9. ສືບສວນ, ຈັບກຸມ, ດຳເນີນຄະດີ, ແລະ ລົງໂທດຜູ້ຄ້າມະນຸດ ໂດຍອີງຕາມກົດໝາຍຂອງແຕ່ລະປະເທດ ;
10. ຊ່ວຍເຫຼືອແກ່ຜູ້ເຄາະຮ້າຍທາງດ້ານກົດໝາຍ ແລະໃຫ້ຂໍ້ມູນ ຂ່າວສານໃນພາ ສາທີ່ເຂົາເຈົ້າສາມາດເຂົ້າໃຈໄດ້ ;
11. ຂະຫຍາຍການຮ່ວມມືໃຫ້ປະກົດຜົນເປັນຈິງ ແລະ ມີປະສິດທິພາບໃນລະບົບຍຸຕິທຳ ເພື່ອກຳຈັດອະພິສິດຂອງຜູ້ຄ້າມະນຸດ ແລະ ໃຫ້ຄວາມຍຸຕິທຳແກ່ຜູ້ຖືກເຄາະຮ້າຍ;

12. ເສີມຂະຫຍາຍການຮ່ວມມືລະຫວ່າງກັນໃນຂອບເຂດການບັງຄັບໃຊ້ກົດໝາຍ ໃນລະຫວ່າງ 6 ປະເທດອະນຸພາກພື້ນລຸ່ມແມ່ນ້ຳຂອງ ເພື່ອຕ້ານການຄ້າມະນຸດ ໂດຍຜ່ານຂະບວນການຍຸຕິທຳ ;
13. ສະໜອງບຸກຄະລາກອນ ແລະ ງົບປະມານທີ່ຈຳເປັນ ເພື່ອເສີມສ້າງຄວາມອາດສາມາດ ໃນການປາບປາມການຄ້າມະນຸດ ໂດຍຜ່ານໜ່ວຍງານການບັງຄັບໃຊ້ກົດໝາຍແຫ່ງຊາດ ;
14. ສົ່ງເສີມໃຫ້ມີສັນຍາສອງຝ່າຍ ຫລື ຫລາຍຝ່າຍໃນບັນດາປະເທດ GMS ເພື່ອຊ່ວຍກັນໃນຂະບວນການຍຸຕິທຳ;

**ໃນຂົງເຂດການປ້ອງກັນ, ຟື້ນຟູ, ແລະ ກັບຄືນສູ່ສັງຄົມ :**

15. ສົ່ງເສີມບົດບາດ -ຍິງ-ຊາຍ ແລະ ຄວາມອ່ອນໄຫວ ຂອງເດັກນ້ອຍໃນທຸກຂົງເຂດວຽກທີ່ພົວພັນກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ;
16. ຮັບປະກັນວ່າ ຜູ້ທີ່ຖືກພິສູດວ່າ ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກຈັບກຸມຈາກເຈົ້າໜ້າທີ່ກົດໝາຍ ;
17. ຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທຸກຄົນ ທາງດ້ານບ່ອນພັກເຊົາ ແລະ ຊ່ວຍເຫລືອຢ່າງເໝາະສົມທາງດ້ານຮ່າງກາຍ, ຈິດໃຈ, ກົດໝາຍ, ການສຶກສາ ແລະ ການຮັກສາສຸຂະພາບ ;
18. ຮັບຮອງເອົານະໂຍບາຍ ແລະ ກົນໄກເພື່ອປ້ອງກັນ ແລະ ສະໜັບສະໜູນຊ່ວຍເຫລືອຜູ້ທີ່ປະສົບເຄາະຮ້າຍຈາກການຄ້າມະນຸດ ; .
19. ເສີມຂະຫຍາຍຄວາມສາມາດຂອງສະຖານທູດ ແລະ ສະຖານກົງສຸນ ເພື່ອຮັບປະກັນການຊ່ວຍເຫລືອຜູ້ຖືກເຄາະຮ້າຍໃຫ້ມີປະສິດທິຜົນຍິ່ງຂຶ້ນ ;
20. ຮັບປະກັນການຮ່ວມມືທາງດ້ານການຂ້າມຊາຍແດນ ເພື່ອຄວາມປອດໄພໃນການກັບຄືນປະເທດຂອງຜູ້ຖືກເຄາະຮ້າຍ, ລວມເຖິງການຊ່ວຍເຫລືອ ເພື່ອຮັບປະກັນຄວາມເປັນຢູ່ທີ່ດີຂອງເຂົາເຈົ້າ; ແລະ
21. ປະຕິບັດວຽກງານຮ່ວມກັນ ເພື່ອສ້າງເງື່ອນໄຂຄວາມສະດວກແກ່ຄວາມສຳເລັດ ໃນການຟື້ນຟູ ແລະ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ ແລະ ປ້ອງກັນບໍ່ໃຫ້ຖືກເຄາະຮ້າຍອີກຄັ້ງໃໝ່.

IV. ໃນຂົງເຂດມາດຕະການ ການປ້ອງກັນ

22. ຮັບຮອງມາດຕະການຕ່າງໆ ເພື່ອລຸດຜ່ອນຄວາມສ່ຽງ ເຊັ່ນ : ການຊ່ວຍເຫລືອ ໂຄງການຫລຸດຜ່ອນຄວາມທຸກຍາກ; ສົ່ງເສີມໂອກາດທາງດ້ານເສດຖະກິດ; ຮັບປະກັນໂອກາດທາງການສຶກສາ ແລະ ການຝຶກອົບຮົມວິຊາຊີບ ທີ່ມີຄຸນນະພາບ ແລະ ສະໜອງເອກະສານທີ່ຈຳເປັນ ທາງດ້ານກົດໝາຍຂອງບຸກຄົນ, ລວມເຖິງໃບລາຍເກີດ ;

23. ສະໜັບສະໜູນການສ້າງເຄືອຂ່າຍຄຸ້ມຄອງ ແລະ ກວດກາຂອງຊຸມຊົນ ເພື່ອແຈ້ງເຕືອນ ແລະ ແກ້ໄຂລ່ວງໜ້າຕໍ່ພວກທີ່ສ່ຽງ ຕໍ່ການທີ່ຈະຖືກເປັນເຫຍື່ອ ຈາກການຄ້າມະນຸດ ;

24. ປຸກລະດົມຢ່າງກວ້າງຂວາງໃນທຸກລະດັບ, ລວມທັງຜ່ານການໂຄສະນາ ຂົນຂວາຍໃຫ້ເຫັນໄພຮ້າຍແຮງ ແລະ ຜົນສະທ້ອນທາງລົບຂອງການຄ້າມະນຸດ ແລະ ຄວາມສາມາດຊ່ວຍເຫລືອແກ່ຜູ້ຖືກເຄາະຮ້າຍ;

25. ນຳໃຊ້ກົດໝາຍແຮງງານຂອງຊາດ ແລະ ກົດໝາຍອື່ນໆ ເພື່ອປົກປ້ອງສິດທິຂອງຜູ້ອອກແຮງງານ ບົນຫລັກການຂອງການບໍ່ຈຳແນກ ແລະ ມີຄວາມເທົ່າທຽມກັນ;

26. ຊຸກຍູ້ປະເທດປາຍທາງ ລວມທັງປະເທດທີ່ຢູ່ນອກຂົງເຂດປະເທດອະນຸພາກພື້ນແມ່ນ້ຳຂອງ ໃນການບັງຄັບໃຊ້ກົດໝາຍທີ່ກ່ຽວຂ້ອງຢ່າງມີປະສິດທິພາບ ເພື່ອຫຼຸດຜ່ອນການຮັບເອົາການຂູດຮີດບຸກຄົນ ທີ່ພາໃຫ້ເກີດຄວາມຕ້ອງການ ອັນຕໍ່ເນື່ອງຂອງແຮງງານຈາກການຄ້າມະນຸດ ແລະ ຈຳກັດການກໍ່ອາດຊະຍະກຳໃນການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ໂດຍການຮ່ວມມື ກັນ;

27. ເພີ່ມທະວີການຮ່ວມມືກັບພາກສ່ວນເອກະຊົນ, ໂດຍສະເພາະກັບອຸດສາຫະກຳການທ່ອງທ່ຽວ ແລະ ບັນເທີງ, ເພື່ອມີບົດບາດສຳຄັນໃນການຕໍ່ສູ້ຕ້ານການຄ້າມະນຸດ;

V. ໃນຂອບເຂດກົນໄກການປະຕິບັດ, ການຕິດຕາມ ແລະ ປະເມີນຜົນສຳລັບບັນທຶກຄວາມເຂົ້າໃຈສະບັບນີ້:

28. ສ້າງແຜນປະຕິບັດງານເບື້ອງຕົ້ນຂອງຂົງເຂດອະນຸພາກພື້ນ ຕ້ານການຄ້າມະນຸດ 2005 - 2007 ແລະ ໃຊ້ທຸກຄວາມພະຍາຍາມອັນຈຳເປັນ ເພື່ອຜັນຂະຫຍາຍແຜນປະຕິບັດງານນີ້ຢ່າງຄົບຖ້ວນ ;

29. ຂະຫຍາຍຂັ້ນຕອນສຳລັບການເກັບກຳ ແລະ ວິໄຈຂໍ້ມູນ ແລະ ຂ່າວສານ ກ່ຽວກັບກໍລະນີການຄ້າມະນຸດ ແລະ ຮັບປະກັນວ່າຍຸດທະສາດຕ້ານການຄ້າມະນຸດ ແມ່ນອີງຕາມບົດຄົ້ນຄວ້າທີ່ຊັດເຈນ, ທັນສະພາບການ, ອີງໃສ່ປະສົບການ ແລະ ການວິໄຈ ;

30. ສ້າງຕັ້ງລະບົບການຕິດຕາມການຈັດຕັ້ງປະຕິບັດແຜນປະຕິບັດງານ, ເພື່ອປະເມີນສະພາບການຕົວຈິງ ແລະ ຄວາມຄືບໜ້າຂອງແຕ່ລະປະເທດໃນການຈັດຕັ້ງປະຕິບັດພັນທະຂອງຕົນຕາມ MOU ລວມທັງປະຊຸມເຈົ້າໜ້າທີ່ອະວຸໂສປະຈຳປີ ເປັນຢ່າງນ້ອຍ;

31. ທົບທວນການຈັດຕັ້ງປະຕິບັດແຜນປະຕິບັດງານ ແລະ ການຮັບຮອງເອົາແຜນປະຕິບັດງານສະບັບໃໝ່ຂອງອະນຸພາກພື້ນ ໃນກອງປະຊຸມລັດຖະມົນຕີ ໃນທ້າຍປີ 2007 ;

32. ສ້າງໜ່ວຍງານສະເພາະກິດແຫ່ງຊາດ ເພື່ອປະສານງານກັບກອງເລຂາຂອງ COMMIT ( ໂຄງການສະຫະປະຊາຊາດຕ້ານການຄ້າມະນຸດ ໃນປະເທດອະນຸພາກພື້ນແມ່ນ້ຳຂອງ ) ແລະ ຄູ່ຮ່ວມງານອື່ນໆ ;

33. ເຊື້ອເຊີນອົງການຈັດຕັ້ງຂອງລັດທີ່ໃຫ້ທຶນ, ອົງການສະຫະປະຊາຊາດທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ພາກເອກະຊົນຕ່າງໆ, ໃຫ້ການຊ່ວຍເຫລືອທາງດ້ານການເງິນ, ອຸປະກອນ, ການຊ່ວຍເຫລືອ ທາງດ້ານວິຊາການ ເພື່ອສະໜັບສະໜູນປະເທດອານຸພາກພື້ນແມ່ນ້ຳຂອງ ໃນຄວາມພະຍາຍາມຕ້ານການຄ້າມະນຸດ, ລວມທັງການຈັດຕັ້ງປະຕິບັດບັນທຶກຄວາມເຂົ້າໃຈສະບັບນີ້ ແລະ ແຜນປະຕິບັດງານທີ່ຈະສ້າງຂຶ້ນ.

34. ຮັບຊາບການສະເໜີປັບປຸງບັນທຶກຄວາມເຂົ້າໃຈສະບັບນີ້ ສາມາດກະທຳໄດ້ ໃນອານາຄົດ, ໂດຍຕົກລົງປະຕິບັດຕາມຂັ້ນຕອນສະເໜີປັບປຸງ ດັ່ງນີ້ : (1) ຖ້າສີ່ປະເທດ ໃນທີ່ກປະເທດທີ່ລົງນາມເຫັນວ່າບົດບັນທຶກນີ້ສາມາດປັ່ງນແປງໄດ້ ແລະ ແຈ້ງເປັນລາຍລັກອັກສອນໃຫ້ກອງເລຂາ, ກອງເລຂາຈຶ່ງສາມາດດຳເນີນຂັ້ນຕອນປຶກສາຫາລືຕາມຄວາມເໝາະສົມນຳກັນ; (2) ຈຸດປະສົງຂອງຂັ້ນຕອນນີ້ ກໍເພື່ອສະເໜີປ່ຽນແປງບັນທຶກຄວາມເຂົ້າໃຈ; (3) ທຸກການປ່ຽນແປງຂອງບັນທຶກຄວາມເຂົ້າໃຈສະບັບນີ້ ຕ້ອງໄດ້ຮັບຄວາມເຫັນດີເປັນ ເອກະສັນຈາກ 6 ປະເທດ ແລະ ການຮັບຮອງຂອງແຕ່ລະປະເທດ ຈະຕ້ອງສົ່ງເຖິງກອງເລຂາຢ່າງເປັນລາຍລັກອັກສອນ.

ເຮັດທີ່ຢ້າງກຸ້ງ ໃນວັນທີ່ 29 ຕຸລາ 2004

| | |
|---|---|
| ຕາງໜ້າລັດຖະບານ ແຫ່ງ<br>ຣາຊະອານາຈັກກຳປູເຈຍ | ຕາງໜ້າລັດຖະບານ ແຫ່ງ<br>ສາທາລະນະລັດ ປະຊາຊົນຈີນ |
| ( ອິດ ສຳເຮງ )<br>ລັດຖະມົນຕີວ່າການກະຊວງສະຫວັດດີການສັງຄົມນັກຮົບເກົ່າແລະອົບຮົມເຍົາວະຊົນ | ( ຮວງ ກີງ ຍີ )<br>ຄະນະກຳມະການແຫ່ງຊາດເພື່ອເດັກນ້ອຍ ແລະ ແມ່ຍິງ ພາຍໃຕ້ສະພາແຫ່ງລັດ |

ຕາງໜ້າລັດຖະບານ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

( ສົມພັນ ແພງຄຳມີ )
ລັດຖະມົນຕີວ່າການກະຊວງແຮງງານ

ຕາງໜ້າລັດຖະບານ ແຫ່ງ
ສະຫະພາບ ມຽນມາ

( ພັນເອກ ຕິນ ຣະແລງ )
ລັດຖະມົນຕີວ່າການກະຊວງພາຍໃນ

ຕາງໜ້າລັດຖະບານ ແຫ່ງ
ຣາຊະອານາຈັກໄທ

( ວັນລົບ ພະລອຍທັບທິມ )
ຫົວໜ້າຫ້ອງການ ( ປະລັດ )
ກະຊວງພັດທະນາສັງຄົມແລະຄວາມໝັ້ນຄົງມະນຸດ

ຕາງໜ້າລັດຖະບານ ແຫ່ງ
ສາທາລະນະລັດ ສັງຄົມນິຍົມຫວຽດນາມ

( ພົນໄທ ເລເຫຽນ )
ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນ
ຄວາມສະຫງົບ